ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ນະຄອນຫຼວງວຽງຈັນ
ເມືອງສີໂຄດຕະບອງ

ເລກທີ...872.../ຈມສບ
ລົງວັນທີ...4...11...2024

ຂາເຂົ້າ ສຳນັກງານອົງການປົກຄອງ ນວ
ໜ່ວຍງານບໍລິການປະຕູດຽວ
ເລກທີ:.......5065.....
ວັນທີ:...6...11...24...

# ໜັງສືລາຍງານ

**ຮຽນ:** ທ່ານເຈົ້າຄອງນະຄອນຫຼວງວຽງຈັນ ທີ່ເຄົາລົບ ແລະ ນັບຖືຢ່າງສູງ.

**ເລື່ອງ:** ການຈັດຕັ້ງປະຕິບັດວຽກງານປັບປຸງ ພັດທະນາສວນສີໂຄດຕະບອງ.

- ອີງຕາມກົດໝາຍປົກອີງຕາມກົດໝາຍປົກຄອງທ້ອງຖິ່ນ (ສະບັບປັບປຸງ) ເລກທີ 68/ສພຊ ລົງວັນທີ 14 ທັນວາ 2015 ພາກທີ IV ໝວດທີ 4 ມາດຕາ 39 ແລະ 40 ວ່າດ້ວຍພາລະບົດບາດ,ສິດ ແລະ ໜ້າທີ່ ຂອງເຈົ້າເມືອງ.
- ອີງຕາມ ໜັງສືທາງລັດຖະການ ສະບັບເລກທີ 642/ຫອນວ, ລົງວັນທີ 28 ມີນາ 2023 ກ່ຽວກັບການມອບສວນສາທາລະນະຈຳນວນໜຶ່ງໃຫ້ອົງການປົກຄອງເມືອງສີໂຄດຕະບອງເປັນເຈົ້າການຄຸ້ມຄອງ ແລະ ປົກປັກຮັກ ສາໃຫ້ມີຄວາມຍືນຍົງ.
- ອີງຕາມ ໜັງສືທາງລັດຖະການສະບັບເລກທີ 1409/ຫອນວ ລົງວັນທີ 28 ກໍລະກົດ 2023 ວ່າດ້ວຍການມອບສິດໃຫ້ຫ້ອງການຄຸ້ມຄອງ ແລະ ບໍລິການຕົວເມືອງ ເຊັນບົດບັນທຶກມອບ-ຮັບ ສວນສາທາລະນະສີໂຄດຕະບອງ ໃຫ້ກັບອົງການປົກຄອງເມືອງເປັນຜູ້ຄຸ້ມຄອງ.
- ອີງຕາມການຕົກລົງກອງປະຊຸມຄະນະປະຈຳພັກເມືອງ ຄັ້ງທີ 48 ວັນທີ 27 ກັນຍາ 2024 ກ່ຽວກັບການຈັດຕັ້ງປະຕິບັດວຽກງານປັບປຸງ ພັດທະນາສວນສີໂຄດຕະບອງ.

**ເຈົ້າເມືອງສີໂຄດຕະບອງ** ນະຄອນຫຼວງວຽງຈັນ ຂໍລາຍງານກ່ຽວກັບສະພາບການຄຸ້ມຄອງບູລະນະປັບປຸງສວນສາທາລະນະສີໂຄດຕະບອງ ດັ່ງນີ້:

## I. ສະພາບລວມຂອງສວນສາທາລະນະສີໂຄດຕະບອງ.

ສວນສີໂຄດຕະບອງເປັນດິນລັດຄຸ້ມຄອງ ຕາມໃບຕາດິນລັດ ສະບັບເລກທີ 467 ລົງວັນທີ 21 ທັນວາ 2021 ມີເນື້ອທີ່ທັງໝົດ 38 645 ຕາແມັດ (ສະເພາະພື້ນທີ່ໜອງນໍ້າມີ 25 685 ຕາແມັດ), ເຊິ່ງເປັນການຮ່ວມມືລະຫວ່າງ 2 ນະຄອນ (ນະຄອນວຽງຈັນ ແລະ ນະຄອນບາງກອກ ປະເທດໄທ), ໄລຍະຜ່ານມາແມ່ນຂາດການບຳລຸງຮັກສາ ເຮັດໃຫ້ມີສະພາບຫົກເຮື້ອ,ມີກິ່ນເໝັນ,ສິ່ງຜົນກະທົບຕໍ່ສັງຄົມຢູ່ບໍລິເວນເຂດດັ່ງກ່າວ ນອກຈາກນັ້ນອາຄານຢູ່ໃນບາງສ່ວນກໍ່ມີການເປເພເສຍຫາຍ ແລະ ເກີດມີການບຸກລຸກເອົາເຂດສະຫງວນ ຈາກປະຊາຊົນທີ່ຢູ່ອ້ອມຂ້າງຈຳນວນໜຶ່ງ, ຕໍ່ກັບບັນຫາດັ່ງກ່າວ ໃນຊ່ວງໄລຍະເດືອນ 7 ປີ 2020 ຫາ ເດືອນ 3 ປີ 2021 ຫ້ອງການ ຄບຕ ນວ ໄດ້ວ່າຈ້າງ ບໍລິສັດເອກະຊົນຊື່ບໍລິສັດຄູນທະວົງລາວ ຄົບວົງຈອນຈຳກັດຜູ້ດຽວ ມາອາໄມເອົາຜັກຕົບ ແລະ ຕະກອນອອກຈາກໜອງ ພ້ອມທັງ

ປັບປຸງພື້ນທີ່ໃຫ້ເປັນລະບຽບ ແລະ ຈົບງາມ, ວາງທໍ່ລະບາຍນ້ຳເປື້ອນ,ຂຸມພັກນ້ຳ, ເຮັດຮົ້ວອ້ອມໜອງ ຫລີກລ້ຽງບໍ່ໃຫ້ຄົນມາມົ້ວສຸມຢາເສບຕິດຢູ່ສວນດັ່ງກ່າວ,ປູກຕົ້ນໄມ້,ຂຸດຂຸມອາໂຈມ,ປັບປຸງອາຄານ ຫ້ອງການທີ່ເປເພ, ພາຍຫລັງທີ່ຟື້ນຟູ ແລະ ປັບປຸງແລ້ວ ສວນດັ່ງກ່າວຈຶ່ງກັບຄືນມາສູ່ສະພາບທີ່ດີ, ບໍ່ມີກິ່ນເໝັນ,ສັງຄົມກໍມາອອກກຳລັງກາຍເປັນຈຳນວນຫລາຍ.

**+ ຂໍ້ມູນການກວດກາເກັບກຳສະພາບພື້ນທີ່ຕົວຈິງພາຍໃນ ສວນສີໂຄດຕະບອງ ໃນເບື້ອງຕົ້ນ.**

1. ມີອາຄານຊັ້ນດຽວ 01 ຫຼັງ ມີຂະໜາດກວ້າງ 5 ແມັດ, ຍາວ 9,3 ແມັດ, ມີ 03 ຫ້ອງ, ໃນນັ້ນມີຫ້ອງນ້ຳ ໃນ 02 ຫ້ອງ ແລະ ມີແອ 02 ໜ່ວຍ (ໃຊ້ງານໄດ້ປົກກະຕິ).
2. ມີອາຄານຫ້ອງນ້ຳ 01 ຫຼັງ, ມີຄວາມກວ້າງ 3.8 ແມັດ, ຍາວ 12.2 ແມັດ ມີລະບົບໄຟຟ້າ, ນ້ຳປະປາສ່ວນອຸປະກອນພາຍໃນຫ້ອງນ້ຳແມ່ນເປ່ເພຕ້ອງໄດ້ສ້ອມແປງໃໝ່.
3. ມີອາຄານສາລາ 01 ຫຼັງ, ກວ້າງ 11 ແມັດ, ຍາວ 11 ແມັດ.
4. ມີຕົ້ນໄມ້ອ້ອມຮອບສວນ ຈຳນວນ 43 ຕົ້ນ.
5. ມີເສົາໄຟຟ້າເບື້ອງສວນ (ເສົາໄຟສະປອດໄລ) ຈຳນວນ 02 ຕົ້ນ (ໃຊ້ງານບໍ່ໄດ້).
6. ມີເສົາໄຟຟ້າເບື້ອງທາງ ເຂົ້າ-ອອກ ຈຳນວນ 06 ຕົ້ນ (ໃຊ້ໄດ້ 03 ຕົ້ນ).
7. ມີຕູ້ຄວບຄຸມໄຟ 02 ຕູ້ (ສະພາບເກົ່າໃຊ້ໄດ້ 01 ຕູ້).
8. ມີກອງເຕີນ້ຳປະປາ 01 ໜ່ວຍ ໃຊ້ງານໄດ້ ຕົວເລກປະຈຸບັນ: 8728336
9. ມີກອງເຕີໄຟຟ້າ ໃຊ້ງານໄດ້ ຈຳນວນ 02 ໜ່ວຍ ຂະໜາດ 10/40: ປັດຈຸບັນ ເລກກອງເຕີທີ 1: 006145, ແລະ ເລກກອງເຕີທີ 2: 105873.
10. ມີສວນຫຍ້າຂະໜາດນ້ອຍ ຈຳນວນ 01 ສວນ ມີຂະໜາດເນື້ອທີ່ 500 ຕາແມັດ ພ້ອມກັບປ້າຍສວນ ມີຂະ ໜາດສູງ 1.6 ແມັດ, ຍາວ 5.5 ແມັດ.

**II. ທິດທາງແຜນພັດທະນາສວນສີໂຄດຕະບອງ.**

ເພື່ອສືບຕໍ່ເຮັດໃຫ້ສວນດັ່ງກ່າວໄດ້ຮັບການພັດທະນາໃຫ້ມີຄວາມສະອາດຈົບງາມ ແລະ ຍືນຍົງຮັກສາໄດ້ສະພາບແວດລ້ອມທີ່ດີ, ດຶງດູດການທ່ອງທ່ຽວ ແລະ ເປັນບ່ອນອອກກຳລັງກາຍຂອງສັງຄົມທົ່ວໄປ, ອົງການປົກຄອງເມືອງສີໂຄດຕະບອງ ຮ່ວມກັບຫ້ອງການ ຄຸ້ມຄອງ ແລະ ບໍລິການຕົວເມືອງ ນະຄອນຫຼວງວຽງຈັນ ໄດ້ເປີດກອງປະຊຸມປຶກສາຫາລືກ່ຽວກັບການພັດທະນາສວນດັ່ງກ່າວ ດັ່ງນີ້:

**1.** ໃນວັນທີ 13 ພຶດສະພາ 2022 ໄດ້ເປີດກອງປະຊຸມຄະນະປະຈຳພັກເມືອງ ຮ່ວມກັບຫ້ອງການຄຸ້ມຄອງ ແລະ ບໍລິການຕົວເມືອງ ນະຄອນຫຼວງວຽງຈັນ ໄດ້ຕົກລົງເປັນເອກະພາບເຫັນດີໃຫ້ພັດທະນາສວນສີໂຄດຕະບອງ ຕາມການອອກແບບຂອງຫ້ອງການ ຄບຕ ນະຄອນຫຼວງວຽງຈັນ ໂດຍເນັ້ນຊຸກຍູ້ໃຫ້ບູລິມະສິດແກ່ນັກທຸລະກິດຢູ່ພາຍໃນເມືອງສີໂຄດຕະບອງເປັນຜູ້ພັດທະນາຮ່ວມກັບອົງການປົກຄອງເມືອງ.

**2.** ອົງການປົກຄອງເມືອງສີໂຄດຕະບອງ ໄດ້ເຮັດໜັງສືສະເໜີສະບັບເລກທີ 1181/ຈມສບ ລົງວັນທີ 4/10/2022 ຫາຫົວໜ້າພະແນກການເງິນ ນະຄອນຫຼວງວຽງຈັນ ທັງເປັນຫົວໜ້າຄະນະຮັບຜິດຊອບກະກຽມເງື່ອນໄຂ,ຂໍ້ກຳນົດ,ການປະມູນກິດຈະການ ສວນສີໂຄດຕະບອງ, ໂດຍກຳນົດເງື່ອນໄຂ ແລະ

ທິດທາງໃນການພັດທະນາ ໃຫ້ໄປຕາມທິດທີ່ນະຄອນຫລວງວຽງຈັນກໍານົດ ໂດຍສະເພາະແມ່ນການພັດທະນາ ຕາມ 4 ເງື່ອນໄຂ ແລະ 8 ກິດຈະກໍາດັ່ງນີ້: (1.ຮັກສາພື້ນທີ່ດິນ-ໜອງນໍ້າ ເພື່ອບໍ່ໃຫ້ໝົດໄປ, 2.ກໍ່ສ້າງຕື່ມບາງກິດຈະການເພື່ອເຮັດໃຫ້ເຂດພື້ນທີ່ດິນ ແລະ ໜອງນໍ້າພາຍໃນສວນມີການພັດທະນາໃຫ້ດີຂຶ້ນພ້ອມທັງສະອາດຈົບງາມ ເຮັດໃຫ້ລະບົບລະບາຍນໍ້າ ເຂົ້າ-ອອກສະດວກ, 3.ຮັກສາ,ຄຸ້ມຄອງ ແລະ ບໍລິການໜອງນໍ້າດ້ວຍລະບົບສະມາດ ຫຼື ອັດສະລິຍະ,ມີເຂດສີຂຽວ ແລະ ນໍ້າໃສຕະຫຼອດ, 4.ໃຫ້ໄດ້ຜົນປະໂຫຍດທັງສາມຝ່າຍ ໂດຍສະເພາະແມ່ນຜົນປະໂຫຍດ ສາທາລະນະ,ຜົນປະໂຫຍດຂອງທ້ອງຖິ່ນ ແລະ ຜົນປະໂຫຍດຂອງຜູ້ເຊົ່າ).

ສໍາລັບ **8** ກິດຈະກໍາປະກອບມີ: (ພື້ນທີ່ຈອດລົດ, ເຂດຂາຍສິນຄ້າປອດສານພິດ, ບູດຂາຍເຄື່ອງຫັດຖະກໍາ, ຮ້ານຂາຍກາເຟ, ຮ້ານຂາຍອາຫານທ້ອງຖິ່ນ, ພື້ນທີ່ອອກກໍາລັງກາຍ, ໂຊນຂາຍຕົ້ນໄມ້ປະດັບ, ຫ້ອງນໍ້າສາທາລະນະ ແລະ ເຂດສີຂຽວ), ໂດຍຊຸກຍູ້ໃຫ້ບູລິມະສິດແກ່ນັກທຸລະກິດພາຍໃນເມືອງມີສ່ວນຮ່ວມລົງທຶນພັດທະນາ (ບໍ່ແມ່ນສໍາປະທານ) ໂດຍເຫັນດີໃຫ້ທ່ານ ນັນທະສັກ ບຸນທະລາ ປະທານບໍລິສັດ ບຸນທະລາ ໂຊກຈະເລີນຊັບ ກໍ່ສ້າງຂົວທາງ ຈໍາກັດຜູ້ດຽວ ທັງເປັນປະທານສະມາຄົມນັກທຸລະກິດໜຸ່ມ ແລະ ປະທານສະພາການຄ້າ ແລະ ອຸດສາຫະກໍາຂອງເມືອງສີໂຄດຕະບອງ ເປັນຜູ້ລົງທຶນພັດທະນາຮ່ວມກັບອົງການປົກຄອງເມືອງສີໂຄດຕະບອງ.

**3.** ຫົວໜ້າພະແນກການເງິນ-ຫົວໜ້າຄະນະຮັບຜິດຊອບກະກຽມເງື່ອນໄຂ,ຂໍ້ກໍານົດ,ການປະມູນກິດຈະການ ສວນສີໂຄດຕະບອງ ໄດ້ລາຍງານງານຫາທ່ານເຈົ້າຄອງນະຄອນຫຼວງວຽງຈັນ ສະບັບເລກທີ 808/ກງ ນວ ລົງວັນທີ 24/11/2022 ຕໍ່ກັບທັດສະນະໃນການພັດທະນາສວນສີໂຄດຕະບອງ **ເຫັນວ່າ** ມີເງື່ອນໄຂ ແລະ ສອດຄ່ອງຕາມທິດທາງແຜນພັດທະນາລວມຂອງນະຄອນຫຼວງ ກໍຄືເມືອງສີໂຄດຕະບອງ ທີ່ກໍານົດໄວ້,ເຊິ່ງຈະເປັນທ່າແຮງໜຶ່ງໃຫ້ແກ່ລັດໃນການພັດທະນາສະຖານທີ່ດັ່ງກ່າວ (ສວນສີໂຄດຕະບອງ) ໃຫ້ໄດ້ຮັບການປັບປຸງ ຍົກລະດັບສວນສາທາລະນະໃຫ້ດີຂຶ້ນກວ່າເກົ່າ ໂດຍການມີສ່ວນຮ່ວມຂອງພາກລັດ ແລະ ຜູ້ລົງທຶນ,ເປັນການຫຼຸດຜ່ອນລາຍຈ່າຍການລົງທຶນຂອງລັດ,ສ້າງອາຊີບ-ວຽກເຮັດງານທໍາ ແລະ ສົ່ງເສີມການລົງທຶນ-ບູລິມະສິດນັກທຸລະກິດພາຍໃນເມືອງ ເຊິ່ງທັງໝົດເຫັນວ່າເປັນຜົນປະໂຫຍດລວມໃຫ້ແກ່ລັດ ແລະ ສັງຄົມ, ເຊິ່ງບໍລິສັດ ບຸນທະລາ ໂຊກຈະເລີນຊັບກໍ່ສ້າງ ຂົວທາງ ຈໍາກັດຜູ້ດຽວ ກໍ່ຄືທ່ານ ນັນທະສັກ ບຸນທະລາ ຍັງເປັນປະທານສະມາຄົມນັກທຸລະກິດໜຸ່ມ ແລະ ທັງເປັນປະທານ ສະພາການຄ້າ ແລະ ອຸດສາຫະກໍາເມືອງສີໂຄດຕະບອງ.

**4.** ສໍາລັບການທົດແທນຄືນມູນຄ່າໃນການພັດທະນາພື້ນຖານໂຄງລ່າງຂອງສວນດັ່ງກ່າວໃນເບື້ອງຕົ້ນຂອງລັດໄລຍະຜ່ານມາ ຈໍານວນ 750 383 460 ກີບ ໃຫ້ແກ່ບໍລິສັດ ຄູນທະວົງລາວ ກໍ່ສ້າງຄົບວົງຈອນ ຈໍາກັດ (ຕາມໃບປະເມີນລາຄາໂຄງການພັດທະນາໂຄງການສວນສີໂຄດຕະບອງ ສະບັບເລກທີ 5773/ຍທຂ ນວ ລົງວັນທີ 3 ສິງຫາ 2021) ທາງບໍລິສັດ ບຸນທະລາ ໂຊກຈະເລີນຊັບ ກໍ່ສ້າງຂົວທາງ ຈໍາກັດຜູ້ດຽວ ຈະເປັນຜູ້ຮັບຜິດຊອບທັງໝົດ ແລະ ສະເໜີພະແນກການເງິນນະຄອນຫຼວງວຽງຈັນນໍາເຂົ້າແຜນເພື່ອຊໍາລະຄືນໃຫ້ບໍລິສັດ ຄູນທະວົງລາວ ກໍ່ສ້າງຄົບວົງຈອນ ຈໍາກັດ ຕາມລະບຽບການ. (ຕາມບົດບັນທຶກກອງປະຊຸມຄັ້ງວັນທີ 5 ມັງກອນ 2024).

**5.** ຕໍ່ກັບແນວຄວາມຄິດໃນການພັດທະນາ ສ້າງເປັນໂຄງການຕະຫຼາດເຄື່ອງຖ່າຍສິລະປິນ, ໂດຍການສຶກສາສຳຫຼວດ ອອກແບບ ແລະ ຄິດໄລ່ຂອງ ບໍລິສັດ National PCL & Zlcure Coporation ນັ້ນ, ພື້ນຖານທາງບໍລິສັດບຸນທະລາ ໂຊກຈະເລີນຊັບ ກໍ່ສ້າງຂົວທາງ ຈຳກັດຜູ້ດຽວ ແມ່ນມີຄວາມເປັນເອກະພາບ ແລະ ຍິນດີພັດທະນາຕາມແນວທາງ ຂອງນະຄອນຫຼວງວຽງຈັນໃນທຸກຮູບແບບ ແລະ ເງື່ອນໄຂເພື່ອພັດທະນາສວນດັ່ງກ່າວໃຫ້ເປັນຮູບປະທຳ.

**6.** ໂດຍປະຕິບັດຕາມໜັງສືທາງລັດຖະການສະບັບເລກທີ 1409/ຫອນວ ລົງວັນທີ 28 ກໍລະກົດ 2023 ວ່າດ້ວຍການມອບສິດໃຫ້ຫ້ອງການຄຸ້ມຄອງ ແລະ ບໍລິການຕົວເມືອງ ເຊັນບົດບັນທຶກມອບ-ຮັບ ສວນສາທາລະນະສີໂຄດຕະບອງ ໃຫ້ກັບອົງການປົກຄອງເມືອງເປັນຜູ້ຄຸ້ມຄອງ, ດັ່ງນັ້ນໃນວັນທີ 17 ສິງຫາ 2023 ຫ້ອງການ ຄຸ້ມຄອງ ແລະ ບໍລິການຕົວເມືອງ ນະຄອນຫຼວງວຽງຈັນ ແລະ ອົງການປົກຄອງເມືອງສີໂຄດຕະບອງໄດ້ຈັດພິທີຮ່ວມເຊັນບົດບັນທຶກມອບ-ຮັບ ສວນສີໂຄດຕະບອງໃຫ້ແກ່ອົງການປົກຄອງເມືອງເພື່ອສືບຕໍ່ຄຸ້ມຄອງ. (ລົງລາຍເຊັນ ຜູ້ມອບ ໂດຍແມ່ນຫ້ອງການຄຸ້ມຄອງ ແລະ ບໍລິການຕົວເມືອງ ແລະ ຜູ້ຮັບ ເຊັນໂດຍທ່ານເຈົ້າເມືອງສີໂຄດຕະບອງ).

ໄລຍະຜ່ານມານັບແຕ່ເດືອນ ກໍລະກົດ ປີ 2023 ອົງການປົກຄອງເມືອງສີໂຄດຕະບອງ ແລະ ຫ້ອງການ ຄບຕ ນະຄອນຫຼວງວຽງຈັນ ໄດ້ສົມທົບກັບ ບໍລິສັດ ບຸນທະລາ ໂຊກຈະເລີນຊັບ ກໍ່ສ້າງຂົວທາງ ຈຳກັດຜູ້ດຽວ ໄດ້ສຳຫຼວດ,ປັບປຸງສ້ອມແປງຄືນບາງໜ້າວຽກຈຳນວນໜຶ່ງ ດັ່ງນີ້:

1) ປັບປຸງຫ້ອງນ້ຳເດີມ ແລະ ສ້າງຫ້ອງນ້ຳໃໝ່ພ້ອມທັງຕິດຕັ້ງລະບົບນ້ຳຕັ້ງແຕ່ກົງເຕີຫາຫ້ອງນ້ຳ ແລະ ພາຍໃນຫ້ອງນ້ຳ,ຕິດຕັ້ງລະບົບໄຟຟ້າທັງໝົດ ລວມທັງສ້ອມແປງພື້ນຂ້າງຫ້ອງນ້ຳ,ກໍ່ອ່າງລ້າງໃໝ່ ແລະ ອ່າງບຳບັດນ້ຳ, ພ້ອມອະນາໄມສວນ **ມູນຄ່າກໍ່ສ້າງ 426.881.000 ກີບ.**
2) ຕິດຕັ້ງລະບົບໄຟໂຊລາເຊວອ້ອມໜອງ ແລະ ທາງເຂົ້າ **ມູນຄ່າການກໍ່ສ້າງ 109.110.000 ກີບ.**
3) ວາງໄຟຟ້າ ເດີນລະບົບໄຟຟ້າຄືນໃໝ່ທັງໝົດ **ມູນຄ່າການກໍ່ສ້າງ 225.600.000 ກີບ.**
4) ເຄື່ອງໃຊ້ຫ້ອງການ ແລະ ສ້ອມແປງຫ້ອງການຄືນໃໝ່ **ມູນຄ່າການກໍ່ສ້າງ 70.060.000 ກີບ.**
5) ປູໜອນທາງຍ່າງ ແລະ ສ້ອມແປງທາງຍ່າງອ້ອມໜອງ **ມູນຄ່າການກໍ່ສ້າງ 120.750.000 ກີບ.**
6) ປັບປຸງຄູກາງທາງເຂົ້າສວນ **ມູນຄ່າການກໍ່ສ້າງ 89.020.000 ກີບ.**
7) ກຳລັງອ້າຍນ້ອງທະຫານປະຈຳການປ້ອງກັນ 2 ສະຫາຍ (8 ເດືອນ) **ມູນຄ່າ 60.000.000 ກີບ/ປີ.**
8) ມູນຄ່າອາກອນ 10% **ມູນຄ່າ 110.142.100 ກີບ**

**ລວມມູນຄ່າທັງໝົດ 1.211.563.100 ກີບ**

**III. ພາກສະເໜີ.**

ປະຈຸບັນອີງໃສ່ສະພາບການຄຸ້ມຄອງ,ປ້ອງກັນຕົວຈິງເຫັນວ່າຍັງພົບຄວາມຫຍຸ້ງຍາກ ເນື່ອງຈາກການຄຸ້ມຄອງ ປິດ-ເປີດ ທາງເຂົ້າ ອອກ ສວນດັ່ງກ່າວ ຍັງບໍ່ທັນສາມາດເຮັດໄດ້ຢ່າງຂາດຕົວ ແລະ ມີປະສິດທິພາບເທົ່າທີ່ຄວນ, ຍ້ອນຍັງບໍ່ທັນມີນິຕິກຳຢັ້ງຢືນຈາກຂັ້ນເທິງເພື່ອເປັນບ່ອນອີງ,ເຮັດໃຫ້ຍັງມີກຸ່ມຄົນຈຳນວນໜຶ່ງ, ໂດຍສະເພາະກຸ່ມຄົນເລລ້ອນ ບາງຈຳນວນ ຍັງມີການເຄື່ອນໄຫວ ທຽວເຂົ້າ-ອອກ ຢູ່ບໍລິເວນສວນດັ່ງກ່າວຢູ່,

ເຊິ່ງຫາກແກ່ຍາວອາດຈະສົ່ງຜົນກະທົບໃຫ້ແກ່ສິ່ງປຸກສ້າງ ແລະ ລະບົບຕ່າງໆພາຍໃນສວນທີ່ໄດ້ປັບປຸງສ້ອມແຊມແລ້ວນັ້ນຖືກເສຍຫາຍ ແລະ ຊຸດໂຊມໄປອີກ, ເພື່ອເຮັດໃຫ້ການຄຸ້ມຄອງສວນສີໂຄດຕະບອງ ມີປະສິດທິພາບ ແລະ ພັດທະນາເປັນຮູບປະທຳ, ມີປະສິດທິຜົນ ແລະ ເກີດປະໂຫຍດແກ່ສັງຄົມ, ທັງເປັນການສ້າງລາຍຮັບເຂົ້າງົບປະມານຂອງລັດ,

ໃນວັນທີ 16 ຕຸລາ 2024 ເມືອງສີໂຄດຕະບອງໄດ້ເປີດປະຊຸມຄະນະປະຈຳພັກເມືອງ ເພື່ອຄົ້ນຄວ້າກ່ຽວກັບທິດທາງການພັດທະນາສວນສີໂຄດຕະບອງ ໄດ້ຕົກລົງເປັນເອກະພາບກັນ ດັ່ງນີ້:

1). ພື້ນຖານອົງການປົກຄອງເມືອງສີໂຄດຕະບອງ ເຫັນດີຢັ້ງຢືນໃຫ້ທ່ານ ບັນທະສັກ ບຸນທະລາ ປະທານສະມາຄົມນັກທຸລະກິດໜຸ່ມເມືອງ ເປັນຜູ້ຮ່ວມມືພັດທະນາສວນສີໂຄດຕະບອງ ຮ່ວມກັບອົງການປົກຄອງເມືອງ ຕາມ 4 ເງື່ອນໄຂ ແລະ 8 ກິດຈະກຳ.

2). ລາຍງານທ່ານເຈົ້າຄອງນະຄອນຫຼວງວຽງຈັນ ເພື່ອຂໍທິດຊີ້ນຳກ່ຽວກັບການສະເໜີຮ່ວມມືພັດທະນາສວນສີໂຄດຕະບອງ ລະຫວ່າງອົງການປົກຄອງເມືອງສີໂຄດຕະບອງ ຮ່ວມກັບ ທ່ານ ບັນທະສັກ ບຸນທະລາ ປະທານສະມາຄົມນັກທຸລະກິດໜຸ່ມເມືອງ, ທັງເປັນປະທານສະພາການຄ້າ ແລະ ອຸດສາຫະກຳເມືອງສີໂຄດຕະບອງ (ເຊິ່ງໄລຍະຜ່ານມາ ອົງການປົກຄອງເມືອງໄດ້ຮ່ວມກັບ ບໍລິສັດ ໄດ້ມີການປັບປຸງສ້ອມແປງຄືນບາງໜ້າວຽກຈຳນວນໜຶ່ງແລ້ວໃນມູນຄ່າ 1,211,563,100 ກີບ ໂດຍແມ່ນທຶນຂອງບໍລິສັດທັງໝົດ).

3). ກໍລະນີຖ້າຫາກ ນະຄອນຫຼວງວຽງຈັນ ຫາກມີທິດຊີ້ນຳໃນການພັດທະນາສວນສີໂຄດຕະບອງໃຫ້ແກ່ພາກອື່ນສ່ວນທີ່ກ່ຽວຂ້ອງ ຂອງນະຄອນຫຼວງວຽງຈັນ, ອົງການປົກຄອງເມືອງສີໂຄດຕະບອງກໍ່ເຫັນດີປະຕິບັດໄປຕາມທິດຊີ້ນຳຂອງນະຄອນຫຼວງວຽງຈັນ, ສ່ວນມູນຄ່າເງິນທີ່ພັດທະນາສວນສີໂຄດຕະບອງໄປແລ້ວນັ້ນໃນຈຳນວນ 1,2 ຕື້ກີບ ແມ່ນສະເໜີໃຫ້ນະຄອນຫຼວງວຽງຈັນ ພິຈາລະນາທາງອອກຊ່ວຍ.

ດັ່ງນັ້ນ ຈຶ່ງລາຍງານມາຍັງທ່ານເຈົ້າຄອງນະຄອນຫຼວງວຽງຈັນເພື່ອພິຈາລະນາ.

ຮຽນມາດ້ວຍຄວາມເຄົາລົບ ແລະ ນັບຖື ຢ່າງສູງ.

ເຫັນແທນ ເຈົ້າເມືອງສີໂຄດຕະບອງ

ນະຄອນຫຼວງວຽງຈັນ ເຈົ້າເມືອງ ເມືອງສີໂຄດຕະບອງ

ທອງ ທິດທິລາດ